

Helping your child with literacy and numeracy at home

Lao

# ການຊ່ວຍລູກຂອງທ່ານໃນການຮູ້ໂຕໜັງສື ແລະ ໂຕເລກຢູ່ເຮືອນ

ກະຊວງສຶກສາ ຣັດ NSW

NSW GOVERNMENT

ປຶ້ມຫົວນີ້ໄດ້ຖືກສ້າງຂຶ້ນມາ ສຳ ລັບພໍ່ແມ່, ຜູ້ດູແລ ແລະ ຄອບຄົວຂອງບັນດາເດັກນ້ອຍໃນ ວັຍຕົ້ນໆຂອງການຮຽນ

ມັນເຕັມໄປດ້ວຍກິດຈະກຳຕ່າງໆເພື່ອສນັບ ສນູນ ການຮຽນທີ່ ສຳຄັນທີ່ເກີດຂຶ້ນຢູ່ເຮືອນ. ບັນດາກິດຈະກຳຕ່າງໆ ທີ່ຖືກອອກ ແບບມາເພື່ອໃຫ້ທ່ານມີຄວາມມ່ວນຊື່ນກັບລູກຂອງທ່ານ ແລະ ຊ່ວຍ ໃຫ້ພວກເຂົາມີການເລີ້ມຕົ້ນທີ່ດີໃນໂຮງຮຽນ.

ສນັບສນູນຊຸກຍູ້ໃຫ້ລູກຂອງທ່ານເຂົ້າຮ່ວມແລະຄົ້ນຫາກິດຈະ ກຳ ແລະສນັບສນູນການຕອບຮັບຂອງແຕ່ລະບຸກຄົນ.

# ສາລະບານ


## ການຮູ້ໂຕໜັງສື 4

ການເວົ້າ ແລະ ການຟັງ 5

ການອ່ານ 10

ການແຕ້ມ ແລະ ການຂຽນ 16

## ໂຕເລກ 21

ໂຕເລກ ແລະ ການນັບ 22

ການບວກ ແລະ ການລົບ 28

ການລະບຸ ແລະສ້າງແບບ 32

# ການຮູ້ໂຕໜັງສື

## ການຊ່ວຍລູກທ່ານພັດທະນາທັກສະການຮູ້ໂຕໜັງສືຂອງພວກເຂົາ

ການຮູ້ໂຕໜັງສືແມ່ນພົວພັນກັບ ການຟັງ, ການເວົ້າ, ການອ່ານ, ການຂຽນ ແລະ ການສະກົດຄໍາ. ມັນແມ່ນຄວາມສາມາດໃນການສື່ສານ ຄວາມຄິດ ແລະ ອາລົມ, ຄວາມຄິດແລະ ຄວາມຄິດເຫັນ ແລະ ເຮັດໃຫ້ມີຄວາມໝາຍຈາກຂໍ້ຄວາມທີ່ເວົ້າແລະຂຽນ.



# ການເວົ້າ ແລະ ການຟັງ

ທັກສະໃນການເວົ້າແລະການຟັງກໍ່ສ້າງພື້ນ
ຖານໃຫ້ແກ່ການຮຽນຂອງລູກທ່ານຢູ່ໂຮງ ຮຽນ. ທັກສະເຫຼົ່ານີ້ຊ່ວຍໃຫ້ເດັກສາມາດສື່ສານກັບຄົນອື່ນໆ, ສ້າງມິດຕະພາບແລະ ມີສ່ວນຮ່ວມຢ່າງແຂງຂັນໃນທຸກໆກິດຈະກໍາຢູ່ໂຮງຮຽນ.

ຖ້າທ່ານເວົ້າພາສາອື່ນນອກຈາກພາສາອັງກິດຢູ່ເຮືອນມັນເປັນສິ່ງສໍາຄັນທີ່ທ່ານຕ້ອງສືບຕໍ່ສນັບສນູນ ລູກຂອງທ່ານໃຫ້ໃຊ້ພາສາຂອງພວກເຂົາຢູ່ໃນເຮືອນ.

# ເວົ້າລົມກັບລູກຂອງທ່ານ

- **ເວົ້າລົມກັບລູກຂອງທ່ານກ່ຽວ**ກັບຫົວຂໍ້ຕ່າງໆ, ຍົກຕົວຢ່າງ ສິ່ງຕ່າງໆທີ່ເກີດຂື້ນໃນແຕ່ລະມື້.
- **ແບ່ງປັນເລື້ອງນິທານຕ່າງໆ**ຈາກວັດທະນະ ທຳຂອງທ່ານ, ເລື້ອງລາວຂອງທ່ານເອງແລະເລື້ອງຂອງລູກໆຂອງທ່ານ.
- **ອະທິບາຍຫຼືເວົ້າລົມກ່ຽວກັບສິ່ງຕ່າງໆ** ທີ່ພວມເກີດຂື້ນ. ຍົກຕົວຢ່າງ,"ມື້ນີ້ພວກເຮົາ ຈະຍ່າງໄປໂຮງຮຽນ ແລະ ຍ່າງຜ່ານສວນສາທາລະນະ."
- **ຟັງລູກຂອງທ່ານແລະຊຸກຍູ້ໃຫ້ພວກເຂົາປ່ຽນຟຽນຟັງ.** ສະແດງວິທີການຟັງ ແລະໂຕ້ຕອບໃນການສົນທະນາ.
- ເມື່ອເລີ້ມການສົນທະນາ ຫຼື ເວລາເວົ້າລົມກັບລູກທ່ານ ຈົ່ງ**ຖາມຄຳຖາມ** ທີ່ຕ້ອງການ ຄຳຕອບທີ່ຫຼາຍກວ່າຄຳວ່າ ແມ່ນ ຫຼື ບໍ່ແມ່ນ. ຍົກຕົວຢ່າງ,"ມື້ນີ້ເຈົ້າໄດ້ເຮັດຫຍັງຢູ່ໂຮງຮຽນ?"
- ໃຊ້ ຄຳຖາມທີ່ **ເລີ້ມຕົ້ນດ້ວຍຄຳວ່າ ເທົ່າໃດ ຫຼື ຍ້ອນຫຍັງ.** ຍົກຕົວຢ່າງ, "ເຈົ້າເຫັນນົກຫຼາຍເທົ່າໃດໃນສວນສາທາລະນະ?"
- ເມື່ອຖາມ ຄຳຖາມ **ຈົ່ງໃຫ້ລູກທ່ານມີເວລາຕອບ.**
- **ເຮັດໃຫ້ການສົນທະນາມ່ວນຊື່ນ.** ແຕ່ງເລື່ອງຕະຫລົກ, ລົມກັນແລະຮ້ອງເພງກັບລູກຂອງທ່ານ.

# ການສື່ສານຂໍ້ຄວາມ

- **ເລົ່າເລື່ອງຄືນອີກ.** ເວົ້າລົມກ່ຽວກັບສິ່ງທີ່ເກີດຂຶ້ນຕັ້ງແຕ່ຕອນເລີ່ມຕົ້ນ, ຕອນກາງ ແລະຕອນທ້າຍຂອງເລື່ອງ.
- ຫຼັງຈາກອ່ານແລ້ວ **ເວົ້າກ່ຽວກັບຕົວລະຄອນ**ຫຼື ສ່ວນທີ່ທ່ານມັກຂອງປຶ້ມ.
- **ແລກປ່ຽນຄວາມຄິດເຫັນ** ກ່ຽວກັບສິ່ງທີ່ອາດຈະເກີດຂຶ້ນໃນເວລາທີ່ໄປເຫດການເຊັ່ນການສະຫຼອງ ຫຼື ໄປໂຮງຮຽນ. ຫຼັງຈາກເຫດການ, ເວົ້າກ່ຽວກັບສິ່ງທີ່ໄດ້ເກີດຂຶ້ນ ແລະ ຂໍໃຫ້ພວກເຂົາແບ່ງປັນຄວາມຄິດ ແລະຄວາມຮູ້ສຶກຂອງພວກເຂົາ.
- ສນັບສນູນລູກຂອງທ່ານ**ສ້າງເລື່ອງຂອງຕົນເອງ**ຈາກຈິນຕະນາການຂອງພວກເຂົາ. ຖາມ ຄໍາຖາມຕ່າງໆເຊັ່ນ, "ເລື່ອງນີ້ແມ່ນກ່ຽວກັບຫຍັງ?" "ຜູ້ໃດຢູ່ໃນເລື່ອງນີ້?" "ມີຫຍັງເກີດຂຶ້ນໃນເລື່ອງ?"
- **ສອນລູກຂອງທ່ານຊື່ເຕັມ**, ທີ່ຢູ່, ອາຍຸ, ວັນເດືອນປີເກີດ ແລະ ເບີໂທລະສັບຂອງພວກເຂົາ.
- ຫຼັງຈາກໂຮງຮຽນຖາມລູກທ່ານວ່າມື້ຂອງພວກເຂົາເປັນແນວໃດແລະ **ຖາມ ເອົາຂໍ້ມູນເພີ້ມເຕີມ**, ຍົກຕົວຢ່າງ, "ເປັນຫຍັງເຈົ້າຈຶ່ງຮູ້ສຶກແນວນັ້ນ?"



# ປື້ມຕ່າງໆເພື່ອຊ່ວຍລູກຂອງທ່ານໃນການສົນທະນາ ເປັນພາສາອັງກິດ ແລະ ທັກສະໃນການສ້າງຄໍາ


















# ການສ້າງ ຄຳສັບ

- **ໃຊ້ ຄຳເວົ້າອະທິບາຍ**ເມື່ອເວົ້າ. ຖ້າລູກຂອງທ່ານເວົ້າວ່າ, "ນັ້ນແມ່ນໝາ."  ໃຫ້ຕື່ມ ຄຳ ອະທິບາຍເຊັ່ນ, "ນັ້ນແມ່ນໝານ້ອຍ ຂົນຟູ ແລະ ສີຂາວ"

- ສ້າງຄຳສັບຕື່ມຢູ່ບົນພາສາຂອງລູກທ່ານໂດຍ **ການສອນໃຫ້ພວກເຂົາຮູ້ ຄຳສັບໃໝ່ໆ**.

- ເວລາອ່ານກັບລູກທ່ານ **ເວົ້າກ່ຽວກັບ ຄຳສັບ**ທີ່ໃຊ້ໃນປຶ້ມ. ປຶກສາຫາລືກັນກ່ຽວກັບຄວາມ ໝາຍຂອງຄຳສັບຕ່າງໆ. ນອກຈາກນີ້ທ່ານອາດຈະຊອກຫາຄຳສັບໃໝ່ໆໜ້າສົນໃຈທີ່ຈະເວົ້າເຖິງ ມາລົມກັນ.

- **ຝຶກໃຊ້** ຄຳສັບໃໝ່ ໃນປະໂຫຍກນຶ່ງ.

- **ເຮັດປ້າຍ** ສຳ ລັບສິ່ງຂອງຕ່າງໆອ້ອມເຮືອນ.



# ການອ່ານ

ບັນດາເດັກນ້ອຍຮຽນຮູ້ຈາກການອ່ານໃຫ້ຟັງ, ອ່ານກັບຄົນອື່ນໆ ແລະ ອ່ານດ້ວຍຕົນເອງ.

ມີການອ່ານທີ່ມ່ວນຊື່ນ ນຳກັນທຸກໆມື້. ຊອກຫາໂອກາດເຊັ່ນ: ໃນເວລາທີ່ທ່ານ ກຳລັງຍ່າງໄປໂຮງຮຽນ, ຮ້ານຂາຍປື້ມ, ຫ້ອງສມຸດ ແລະ ຫ້າງຊຸບເປີມາຣ໌ເກັດ.

ເວົ້າກ່ຽວກັບເລື້ອງນິທານຕ່າງໆ, ພາສາທີ່ໃຊ້, ຄຳສັບໃນເລື້ອງ, ພ້ອມທັງສຽງຂອງໂຕໜັງສື ໃນ ຄຳສັບ. ອ່ານປື້ມເປັນພາສາບ້ານຂອງເຈົ້າ.

# ອ່ານກັບລູກທ່ານທຸກໆມື້

- **ເຮັດໃຫ້ການອ່ານສນຸກສນານ**ແລະມ່ວນຊື່ນ. ເດັກນ້ອຍຮຽນກ່ຽວກັບການອ່ານໂດຍການເບິ່ງ, ລອກແບບ ແລະ ພົວພັນກັບຄົນອື່ນ.
- **ປ່ອຍໃຫ້ລູກຂອງທ່ານເລືອກແລະອ່ານຄືນປຶ້ມ**ທີ່ພວກເຂົາສົນໃຈ.
- **ເວົ້າລົມກ່ຽວກັບປຶ້ມ** ກ່ອນທີ່ທ່ານຈະເລີ້ມອ່ານ. ເວົ້າລົມກ່ຽວກັບຫົວຂໍ້ແລະສິ່ງທີ່ສາມາດເກີດຂື້ນໃນເລື້ອງ.
- **ສົນທະນາຮູບພາບ**ແລະວິທີທີ່ພວກເຂົາເພີ້ມຕື່ມເຂົ້າໃນເລື້ອງ.
- ໃນຊ່ວງຂອງການອ່ານ **ຖາມລູກທ່ານ ຄໍາຖາມຕ່າງໆ**ກ່ຽວກັບເລື້ອງເຊັ່ນ: "ເຈົ້າຄິດວ່າອາດຈະເກີດຫຍັງຂື້ນຕໍ່ໄປ?" "ເປັນຫຍັງເຈົ້າຄິດແນວນັ້ນ?"
- ຫຼັງຈາກອ່ານການ**ເວົ້າລົມກ່ຽວກັບເລື້ອງນັ້ນ**. ໃຫ້ຖາມ ຄໍາຖາມຕ່າງໆເຊັ່ນ, "ເຈົ້າມັກບົດໃດທີ່ສຸດໃນເລື້ອງນີ້?" ຫຼື "ແມ່ນຫຍັງທີ່ ໜ້າ ຕື່ນເຕັ້ນ, ຕະຫລົກ ຫລື ເສົ້າໃນເລື້ອງ?"
- **ປຸກຍູ້ນແບ່ງປັນອ່ານ** ໜັງສືທີ່ມັກກັບລູກແລະອ້າຍເອື້ອຍນ້ອງຫຼືໝູ່ເພື່ອນຂອງພວກເຂົາ.
- **ເລືອກເອົາວັສດຸການອ່ານຫລາຍປະເພດ**ເຊັ່ນ: ໜັງ ສືພິມ, ວາລະສານ, ໂປສເຕີ, ປ້າຍຖະໜົນ, ສູດອາຫານແລະລາຍການຊື້ເຄື່ອງ.

# ປຶ້ມທີ່ເປັນພາສາອັງກິດທີ່ມີ ຄຳສຳຜັດ















# ມີຄວາມມ່ວນຊື່ນກັບການອ່ານ, ພາສາແລະ ຄຳສັບ

- **ເລືອກປື້ມຮຽນພາສາອັງກິດທີ່ມີ ຄຳສຳຜັດກັນ** ຫລື ມີ ປິສນາ ຢູ່ໃນນັ້ນ.
- **ເວົ້າລົມກ່ຽວກັບ ຄຳ ສຳຜັດ.** Cat, hat, sat, bat ແມ່ນຕົວຢ່າງທັງໝົດ ຂອງ ຄຳ ສັບທີ່ມີສຳຜັດໃນພາສາອັງກິດເພາະວ່າມັນມີສຽງຄ້າຍຄືກັນໃນຕອນສຸດ ທ້າຍ.
- **ຫຼິ້ນກັບ ຄຳ** ເວົ້າທີ່ສຳຜັດກັນແລະຫລິ້ນເກມທີ່ສຳຜັດກັນເປັນພາສາອັງກິດ. ເຮັດປະ ໂຫຍກທີ່ສຳຜັດກັນເຊັ່ນ: “Have you ever seen a snail deliver the mail?”











## ຫຼິ້ນກັບສຽງຂອງໂຕໜັງສື

- **ມີຄວາມມ່ວນຊື່ນກັບສຽງຂອງໂຕໜັງສື.** ເຮັດປະໂຫຍກແບບໂງ່ໆຕະຫຼົກໆໂດຍໃຊ້ ຄຳ ທີ່ເລີ່ມຕົ້ນດ້ວຍສຽງດຽວກັນ.
- ເມື່ອທ່ານອ່ານໃຫ້ລູກຂອງທ່ານຟັງ, ຂໍໃຫ້ພວກເຂົາຊີ້ແລະ**ເວົ້າສຽງ**ທີ່ພວກເຂົາຮູ້.
- **ຫຼິ້ນເກມສຽງ**ດ້ວຍຊື່ຂອງລູກທ່ານ. ຖາມ ຄຳ ຖາມຕ່າງໆເຊັ່ນ: "ຊື່ຂອງເຈົ້າເລີ່ມຕົ້ນດ້ວຍສຽງຫຍັງ?" "ມັນແມ່ນສຽງດຽວກັນໃນຕອນເລີ້ມຕົ້ນຂອງ dad ບໍ?"

# ປື້ມກ່ຽວກັບໂຕໜັງສືເປັນພາສາອັງກິດ














# ການແຕ້ມ ແລະ ການຂຽນ

ຊຸກຍູ້ໃຫ້ລູກຂອງທ່ານແຕ້ມແລະຂຽນກ່ຽວກັບສິ່ງທີ່ ໜ້າ ສົນໃຈ.

ຂໍໃຫ້ລູກຂອງທ່ານເວົ້າກ່ຽວກັບຮູບແຕ້ມ, ແລະ ການຂຽນຂອງພວກເຂົາ. ສົນໃຈເລື້ອງຂອງພວກເຂົາ ແລະ ພວກເຂົາເລືອກທີ່ຈະແຕ້ມຫຼືຂຽນມັນແນວໃດ.



# ຂຽນທຸກໆມື້

- **ມີຄວາມມ່ວນກັບການແຕ້ມແລະການຂຽນ.** ຂໍໃຫ້ລູກຂອງທ່ານແຕ້ມ ຫຼືຂຽນກ່ຽວກັບສິ່ງທີ່ພວກເຂົາມັກເຮັດ, ປະດິດ ຫຼື ຫລິ້ນ.
- **ຊຸກຍູ້ໃຫ້ລູກທ່ານເວົ້າກ່ຽວກັບການຂຽນຂອງພວກເຂົາ.** ນີ້ອາດລວມທັງການເວົ້າກ່ຽວກັບການຂຽນຫຼິ້ນໆ, ການແຕ້ມ, ໂຕໜັງສື ຫລື ຄຳເວົ້າ ຂອງພວກເຂົາ.
- **ໃຊ້ວັດສະດຸທີ່ແຕກຕ່າງກັນເຊັ່ນ**: ສໍຂາວ, ເຈ້ຍ ແລະສໍດຳ, ປາກກາສີມາກເກີ ແລະ ປາກກາ ເພື່ອໃຊ້ແຕ້ມແລະຂຽນ.
- **ຂໍໃຫ້ລູກຂຽນຊື່ຂອງພວກເຂົາ.** ລູກຂອງທ່ານອາດພະຍາຍາມຂຽນຊື່ຂອງຄົນອື່ນທີ່ ສຳຄັນ ສຳລັບພວກເຂົາ.
- ໃນຂະນະທີ່ລູກຂອງທ່ານ ກຳ ລັງຂຽນ ຫຼືແຕ້ມຮູບ **ເວົ້າກ່ຽວກັບຮູບແລະສຽງຂອງໂຕ** ໜັງສືທີ່ລາວ ກຳລັງພະຍາຍາມຂຽນຢູ່.
- **ສນັບສນູນໃຫ້ລູກຂອງທ່ານໃຊ້ຈິນຕະນາ ການຂອງພວກເຂົາ** ແລະ ສ້າງເລື່ອງ. ພວກເຂົາສາມາດສ້າງປື້ມນິທານໂດຍແຕ້ມຮູບແລະ ຂຽນ ຄຳເວົ້າ ສຳລັບເລື່ອງ.
- ສນັບສນູນ ລູກຂອງທ່ານໃຫ້**ຂຽນຂໍ້ຄວາມເປັນພາສາບ້ານຂອງເຂົາເຈົ້າ**.



# ການແຕ້ມ ແລະ ການຂຽນເພື່ອຈຸດປະສົງ

- **ຊຸກຍູ້ໃຫ້ລູກຂອງທ່ານແຕ້ມຫຼືຂຽນລາຍການຊື້ເຄື່ອງ**, ຫຼື ກ່ຽວກັບຄົນທີ່ເຂົາເຈົ້າມັກໃນຄອບຄົວ, ຫຼື ປຶ້ມທີ່ເຂົາມັກ.
- **ສ້າງເພງຫລືບົດກອນ** ແລະ ຂຽນ ຄໍາສັບ ຫລືແຕ້ມຮູບເພື່ອໃຫ້ເຂົ້າກັບບົດເພງ ຫລື ບົດກອນນັ້ນ.
- **ຂໍໃຫ້ລູກທ່ານອະທິບາຍ**ກ່ຽວກັບສິ່ງທີ່ພວກເຂົາ ກໍາລັງແຕ້ມຫລືຂຽນໃນຂະນະທີ່ພວກເຂົາ ກໍາລັງເຮັດຢູ່.
- ຊຸກຍູ້ໃຫ້ພວກເຂົາ**ຂຽນຈົດໝາຍ** ຫາເພື່ອນ ຫຼື ຜູ້ໃດຜູ້ນຶ່ງໃນຄອບຄົວກ່ຽວກັບສິ່ງທີ່ ໜ້າ ສົນໃຈ, ຕະຫລົກ ຫລື ຕື່ນເຕັ້ນທີ່ເກີດຂື້ນ.
- **ມີປື້ມນ້ອຍໆ, ວາລະສານ ຫລື ບັນທຶກປະ ຈໍາວັນ** ທີ່ລູກຂອງທ່ານສາມາດຂຽນຫລືແຕ້ມໃນທຸກໆວັນ.
- **ເຮັດບັດ** ຫຼື ບັດເຊີນ ສໍາລັບການສະຫລອງຫລືເຫດການພິເສດ.



# ເວົ້າກ່ຽວກັບຂໍ້ຄວາມ

- ຂໍໃຫ້ລູກທ່ານ**ສ້າງຂໍ້ຄວາມ**ທີ່ພວກເຂົາຕ້ອງການສື່ງ. ມັນອາດຈະເປັນໂປສເຕີເຊັ່ນ: "ລະວັງໝາ", ຫຼື ຈົດໝາຍ ເຖິງຄູຂອງພວກເຂົາກ່ຽວກັບສິ່ງທີ່ພວກເຂົາມັກເຮັດ.
- **ໃຊ້ຄໍາສັບທີ່ໃຊ້ໃນແຕ່ລະວັນ**ທີ່ເປັນສ່ວນນຶ່ງ ຂອງວັດທະນະທໍາ, ປະສົບການ ແລະ ຄວາມສົນໃຈຂອງລູກທ່ານ.
- **ເວົ້າລົມກ່ຽວກັບເລື່ອງຕ່າງໆຫຼື ໂຕໜັງສື** ທີ່ລູກທ່ານໄດ້ຂຽນຫຼືທີ່ທ່ານໄດ້ອ່ານນໍາ ກັນ.
- ເວລາເວົ້າ, ສນັບສນູນລູກທ່ານໃຫ້ເວົ້າ**ເປັນປະໂຫຍກໂດຍໃຊ້ຄໍາສັບຕ່າງໆ**.







# ໂຕເລກ

## ການຊ່ວຍເຫຼືອລູກຂອງທ່ານພັດທະນາທັກສະດ້ານການຮູ້ໂຕເລກຂອງພວກເຂົາ

ການຮູ້ໂຕເລກກ່ຽວຂ້ອງກັບການສາມາດເຂົ້າໃຈວິທີການເຮັດວຽກຂອງໂຕ ເລກໃນສະຖານະການຂອງທຸກໆມື້.

ພວກເຮົາເຫັນ ແລະ ນຳໃຊ້ໂຕເລກທຸກໆມື້. ເມື່ອເຮົາອ່ານກໍມີຕົວເລກຢູ່ໃນໜ້າຂອງປຶ້ມ, ເຮືອນຂອງພວກເຮົາກໍມີ ເລກເຮືອນ ແລະ ເມື່ອພວກເຮົາຊື້ເຄື່ອງບາງຢ່າງພວກເຮົາກໍບວກ ແລະ ລົບເລກ.

ຊ່ວຍລູກຂອງທ່ານໃຫ້ມີທັດສະນະຄະຕິໃນທາງບວກຕໍ່ການຮູ້ເລກ.

ມັນເປັນສິ່ງ ສຳຄັນທີ່ຈະສ້າງທັກສະດ້ານການຮູ້ເລກໃນພາສາບ້ານຂອງທ່ານ.



# ໂຕເລກ ແລະ ການນັບ

ທັກສະອັນທຳອິດທີ່ພວກເດັກນ້ອຍພັດທະນາ ແມ່ນການນັບເລກ. ການນັບເລກ ລວມມີ:

- ການເວົ້າແລະການຈື່ ຈຳ ຕົວເລກໃຫ້ຖືກ ຕ້ອງຕາມລຳດັບ
- ຈັບຄູ່ຈຳນວນເລກໃຫ້ກົງກັບວັດຖຸ
- ຮູ້ວ່າຕົວເລກສຸດທ້າຍທີ່ນັບເປັນຕົວແທນຂອງຈຳນວນວັດຖຸທັງໝົດ.

## ຄຳສັບຕ່າງໆທີ່ຈະໃຊ້

- ນັບໄປໜ້າ, ນັບຖອຍຫລັງ
- ເລກກ່ອນ, ເລກຫຼັງ
- ຫຼາຍກ່ວາ, ຫນ້ອຍກ່ວາ
- ແມ່ນຄືກັນກັບ.

# ໂຕເລກອັງກິດ

| | | | |
|---|---|---|---|
| 0 | zero | 1 | one |
| 2 | two | 3 | three |
| 4 | four | 5 | five |
| 6 | six | 7 | seven |
| 8 | eight | 9 | nine |
| 10 | ten | | |



# ກິດຈະກຳຕ່າງໆ ເພື່ອຊຸກຍູ້ການຮຽນກ່ຽວກັບໂຕເລກ

- **ໃຊ້ໝ່ວຍໝາກກະລ໋ອກທີ່ມີຕົວເລກແລະຈຸດ**ເພື່ອຊ່ວຍລູກຂອງທ່ານໃຫ້ຮູ້ ໂຕເລກ ແລະ ຈຳນວນ. ຖາມລູກຂອງທ່ານວ່າ, "ມີຈັກຈຸດຢູ່ເທິງໝ່ວຍໝາກກະລ໋ອກ?"
- **ຫຼິ້ນເກມກະດານ ນຳ ກັນ**ເຊິ່ງໃຊ້ ໝ່ວຍໝາກກະລ໋ອກ ແລະ ການນັບ.
- **ອ່ານແລະແບ່ງປັນນິທານຕ່າງໆ**. ລົມກັນກ່ຽວກັບການນັບ, ຈຳນວນ ແລະ ໂຕເລກທີ່ທ່ານເຫັນໃນໜັງສື, ລວມທັງຕົວເລກຂອງໜ້າໜັງສື.
- **ຂໍໃຫ້ລູກທ່ານຊອກຫາໂຕເລກໃນເວລາຍ່າງ**. ຖາມລູກທ່ານວ່າ "ເຈົ້າສາມາດເບິ່ງເຫັນໂຕເລກຫຍັງແດ່?" ເວົ້າເຖິງເລກເຮືອນ, ປ້າຍຣົດ ແລະ ປ້າຍຖນົນ
- **ເວົ້າກ່ຽວກັບໂຕເລກ**ຕາມສິ່ງຂອງປະຈຳວັນ ເຊັ່ນ: ໂມງ ແລະ ໂທລະສັບ. ຊ່ວຍ ລູກຂອງທ່ານໃຫ້ຈື່ ຈຳ ໂຕເລກທີ່ມີປະໂຫຍດ.

# ການຈື່ຈຳຈຳນວນສິ່ງຂອງ ແລະ ຈຸດ

## ລວດລາຍ ຂອງໝາກກະລ໋ອກ



## ລວດລາຍ ຂອງ ຈຸດ

 3

 4

 6

 6

## ລວດລາຍຈຸດຂອງໂດມິໂນ



# ນັບກັບລູກຂອງທ່ານ

- **ນັບຕອນເວລາທີ່ທ່ານເຮັດສິ່ງຕ່າງໆອ້ອມເຮືອນ**. ແຕ່ງອາຫານສູດງ່າຍໆນຳກັນແລະເຮັດໃຫ້ລູກຂອງທ່ານນັບສ່ວນປະກອບ ຕ່າງໆ.
- **ສນັບສນູນໃຫ້ລູກຂອງທ່ານຊ່ວຍຈັດໂຕະ** ອາຫານສຳລັບຄອບຄົວ. ຂໍໃຫ້ພວກເຂົານັບ ຄົນ, ແລະ ຈານ,ຈອກ, ສ້ອມແລະບ່ວງ ທີ່ຕ້ອງການສຳລັບໂຕະ.
- **ນັບກັບລູກທ່ານ**ຈຳນວນກະດຸມເສື້ອ ໃນຂະນະທີ່ພວກເຂົາຫົ່ມເສື້ອ ໄປໂຮງຮຽນ.
- ຂໍໃຫ້ລູກທ່ານ**ນັບວ່າມີຂອງຈັກຢ່າງ**ຢູ່ໃນກ່ອງອາຫານທ່ຽງຂອງພວກເຂົາ.
- **ນັບໄປຂ້າງໜ້າ**. ນັບເຄື່ອງໃຊ້ປະຈຳວັນ ເຊັ່ນ: ລົດ, ເຮືອນ, ເກີບ ແລະ ກະເປົ໋າ.
- **ນັບຖອຍຫລັງ**. ລົງຂັ້ນໄດໄປຊັ້ນລຸ່ມ ແລ້ວ ຂຶ້ນໄປຊັ້ນເທິງ. 10, 9, 8 ....



# ເພງການນັບເປັນພາສາອັງກິດ

- Here is the Beehive
- Five Little Ducks
- The Ants Go Marching
- One, Two, Buckle My Shoe
- Five Cheeky Monkeys Jumping on the Bed
- Ten Green Bottles

# ໜັງສືຕ່າງໆກ່ຽວກັບໂຕເລກ ແລະ ການນັບ ເປັນພາສາອັງກິດ

















# ການບວກ ແລະ ການລົບ

ເດັກນ້ອຍຕ້ອງໄດ້ພັດທະນາຄວາມເຂົ້າໃຈຂອງການບວກ ແລະ ການລົບ. ນີ້ຮວມເຖິງການລວມເອົາວັດຖຸສອງຢ່າງຫຼືຫຼາຍກວ່ານັ້ນເຂົ້າກັນແລະແຍກວັດຖຸອອກຈາກກັນ.

## ບັນດາຄຳສັບເພື່ອການນຳໃຊ້

- ຮວມກັນກັບ, ຕໍ່ເຂົ້າກັນ, ເຮັດໃຫ້ເປັນ
- ໜ້ອຍກວ່າ, ຫຼາຍກວ່າ
- ທັງໝົດຮວມກັນ
- ເອົາອອກໄປ
- ອີກຫຼາຍເທົ່າໃດ

# ບັນດາກິດຈະກຳຕ່າງໆທີ່ຊ່ວຍສນັບສນູນການບວກເລກ

- **ບວກຈຳນວນຂອງເຄື່ອງໃຊ້ປະຈຳວັນ**, ຂອງຫຼີ້ນ, ໝາກໄມ້, ປື້ມ. ບັນດາເດັກນ້ອຍອາດຈະໃຊ້ນີ້ວມືຂອງພວກເຂົາເພື່ອບວກ.
- ຂະນະທີ່ທ່ານພວມຍ່າງ ໃຫ້ **ບວກ ຈຳນວນສິ່ງຕ່າງໆ**ທີ່ທ່ານເຫັນ, ຍົກຕົວຢ່າງ ດອກໄມ້ໃນສວນ.
- ໃນປະຕິທິນ, ຂໍໃຫ້ລູກຂອງທ່ານ ໝາຍມື້ ທີ່ພວກເຂົາໄດ້ໄປໂຮງຮຽນຫຼືໄດ້ເຮັດກິດຈະກຳ ອື່ນ. ໃນຕອນທ້າຍຂອງອາທິດໃຫ້ **ບວກຈຳນວນມື້ ຂອງແຕ່ລະກິດຈະ ກຳ**.
- ເມື່ອທ່ານໄປຊື້ເຄື່ອງ, ໃຫ້ເວົ້າກ່ຽວກັບສິ່ງທີ່ທ່ານຕ້ອງການຊື້. **ຖາມຄຳຖາມ** ເຊັ່ນ: "ກ້ວຍຈັກໜ່ວຍສຳລັບທຸກໆຄົນໃນຄອບຄົວ? ຖ້າຂ້ອຍເອົາອີກໜ່ວຍນຶ່ງ, ພວກເຮົາຈະມີຈັກໜ່ວຍ?"
- **ຫຼິ້ນເກມທີ່ສນັບສນູນການບວກໂດຍໃຊ້ ໝາກກະລ໋ອກ ສອງອັນ** ຕົວຢ່າງເຊັ່ນ "Snakes and Ladders."





# ກິດຈະກຳ ຕ່າງໆເພື່ອຊຸກຍູ້ການລົບ

- **ລົບສິ່ງຂອງປະຈຳວັນ.** ນັບບັນດາສິ່ງຂອງຕ່າງໆທີ່ຢູ່ໃນກ່ອງອາຫານທ່ຽງ ຂອງພວກເຂົາ ແລະຫຼັງ ຈາກ ນັ້ນຫັກລົບອອກຍ້ອນວ່າສິ່ງຂອງໄດ້ຖືກເອົາອອກໄປແລ້ວ.

- **ເວລາກິນ ຈົ່ງນັບຈຳນວນສິ່ງຂອງ**ວ່າທ່ານມີຫຼາຍເທົ່າໃດ. ຖາມຄຳຖາມເຊັ່ນວ່າ "ເຈົ້າໄດ້ກິນ ໝາກ ອະງຸ່ນຈັກໜ່ວຍ? ມີເຫລືອຢູ່ຫຼາຍເທົ່າໃດ?"

- ສນັບສນູນໃຫ້ລູກຂອງທ່ານ**ສັງເກດຄວາມແຕກຕ່າງເມື່ອສິ່ງຂອງຖືກໂຍກຍ້າຍອອກ**ເຊັ່ນ: ເອົາໄຂ່ອອກຈາກກັບ ຫຼື ເອົາກ້ວຍອອກຈາກຫວີ.

- **ຮ້ອງເພງຕ່າງໆເຊັ່ນ** "Five Little Ducks", ເຊິ່ງຈຳນວນຈະຫຼຸດລົງຍ້ອນວ່າໂຕນຶ່ງ ຖືກເອົາອອກໄປ.

- **ຖາມ ຄຳຖາມ** ເຊັ່ນ: "ພວກເຮົາມີ ໝາກ ແອັບເປີ້ນ 5 ໜ່ວຍຢູ່ໃນຖ້ວຍ. ຖ້າຂ້ອຍໄດ້ກິນໝາກແອບເປີ້ນໄປແລ້ວສອງໜ່ວຍ, ຈະມີໝາກແອັບເປີ້ນເຫຼືອຈັກໜ່ວຍ?"

# ປື້ມຕ່າງໆກ່ຽວກັບການບວກ
# ແລະ ການລົບ ເປັນພາສາອັງກິດ














# ການລະບຸ ແລະສ້າງແບບ

ຮູບແບບແມ່ນຊຸດທີ່ຊ້ຳເກົ່າ. ມັນສາມາດເຮັດຈາກຮູບຊົງ, ສຽງ, ໂຕເລກ ຫຼື ວັດຖຸຕ່າງໆ.

ບັນດາເດັກນ້ອຍສາມາດຮຽນໃນການຈື່ໄດ້, ລະບຸ, ສ້າງ, ຄັດລອກ ແລະ ເຮັດຕໍ່ລາຍແບບຕ່າງໆໂດຍຜ່ານກິດຈະກຳ ປະຈຳວັນ.





## ຄຳສັບຕ່າງໆເພື່ອນຳໃຊ້

- ເຮັດຊ້ຳ
- ສືບຕໍ່
- ປະດິດສ້າງ
- ລະບຸ
- ອະທິບາຍ
- ລວດລາຍ
- ຄືກັນ
- ແຕກຕ່າງກັນ

## ການຈື່ຈຳໄດ້ ແລະ ການລະບຸ ລາຍແບບຕ່າງໆ

- **ລະບຸລາຍແບບຕ່າງໆເຊັ່ນ**: ຢູ່ເທິງເຈ້ຍຫໍ່, ກະເບື້ອງໃນຫ້ອງນ້ຳ ແລະ ທາງຍ່າງ. ເວົ້າກ່ຽວກັບຮູບແບບທີ່ແຕກຕ່າງກັນແລະສິ່ງທີ່ເຮັດໃຫ້ມັນເປັນລາຍແບບ.
- **ໂອ້ລົມກ່ຽວກັບລວດລາຍຕ່າງໆ.** ຖາມຄຳຖາມເຊັ່ນ "ເປັນຫຍັງມັນຈຶ່ງເປັນລວດລາຍ" "ເຈົ້າສາມາດເຮັດລວດລາຍນີ້ຕໍ່ໄປອີກໄດ້ບໍ?"
- **ຫຼິ້ນເກມດ້ວຍບັດ, ໂດມິໂນ ຫຼື ໜ່ວຍໝາກກະລ່ອກ** ເພື່ອຊ່ວຍໃຫ້ລູກຂອງທ່ານຈື່ຈຳລາຍແບບຕ່າງໆ.

# ການລອກລາຍແບບ

- ຫຼິ້ນເກມຕົບມືທີ່ທ່ານ**ຕົບມືເປັນ ລາຍແບບ** ແລະໃຫ້ລູກຂອງ ທ່ານເຮັດ ຊ້ຳແບບນັ້ນ. ຂໍໃຫ້ລູກຂອງທ່ານຕົບມືລາຍແບບທີ່ທ່ານເຮັດຊ້ຳອີກ.
- **ຈັດໂຕະ ສຳລັບອາຫານນຳກັນໂດຍໃຊ້ຮູບແບບ**ເຊັ່ນ: ຈານແລະບ່ວງ, ຈານແລະບ່ວງ, ຈານແລະບ່ວງ.

# ປະດິດສ້າງລາຍແບບ

- **ປະດິດສ້າງລາຍແບບດ້ວຍສິ່ງຂອງ ໃນທຸກໆວັນ** ເຊັ່ນ ຂອງຫຼິ້ນ ແລະ ໝາກໄມ້.
- **ເລີ່ມຕົ້ນດ້ວຍລາຍແບບທີ່ງ່າຍໆ** ແລ້ວສ້າງລາຍແບບທີ່ຍາກຂຶ້ນ ເຊັ່ນ ໝາກແອັບເປີ້ນ ໜ່ວຍນຶ່ງ, ກ້ວຍສອງໜ່ວຍ, ໝາກແອັບເປີ້ນ ໜ່ວຍນຶ່ງ, ກ້ວຍສອງໜ່ວຍ.



# ປື້ມຕ່າງໆກ່ຽວກັບລາຍແບບ ເປັນພາສາອັງກິດ















## ປື້ມຕ່າງໆທີ່ຊ່ວຍລູກທ່ານພັດທະນາທັກສະການຮູ້ໜັງສືພາສາອັງກິດ

### ປື້ມຕ່າງໆສໍາລັບການສົນທະນາ ແລະ ການປະດິດ-ສ້າງຄໍາສັບ

**Dunbi the Owl** – Daisy Utemorrah, editor Pamela Lofts. Scholastic Australia

**Possum Magic** – Mem Fox, illustrator Julie Vivas. Omnibus Books

**Splosh for the Billabong** – Ros Moriarty, illustrator Balarinji. Allen and Unwin

**The Day the Crayons Quit** – Drew Daywalt, illustrator Oliver Jeffers. Harper Collins Children's Books

**The Echidna and the Shade Tree** – Mona Green, editor Pamela Lofts. Scholastic Australia

**The Little Refugee** – Anh and Suzanne Do, illustrator Bruce Whatley. Allen & Unwin Children

**The True Story of the 3 Little Pigs** – Jon Scieszka, illustrator Lane Smith. Penguin

**The Very Cranky Bear** – Nick Bland. Scholastic Australia

## ໜັງສືທີ່ມີຄຳສັບສຳຜັດກັນ

**Miss Spider’s Tea Party** – David Kirk. Scholastic Inc

**No Way Yirrikipayi!** – Alison Lester. Pan Macmillan Australia

**Pig the Pug** – Aaron Blabey. Scholastic Australia

**Piranhas Don’t Eat Bananas** – Aaron Blabey. Scholastic Australia

**Oi Cat!** – Kes Gray, Jim Field. Hachette Australia

**Sebastian Lives in a Hat** – Thelma Catterwell, illustrator Kerry Argent. Omnibus Books

**Walking Through the Jungle** – Stella Blackstone. Barefoot Books

**The Cat in the Hat** – Dr Seuss. Random House

## ໜັງສືຕ່າງໆກ່ຽວກັບໂຕໜັງສື

**ABC Dreaming** – Warren Brim. Magabala Books

**Animalia** – Graeme Base. Picture Puffins

**Dr Seuss’s ABC** – Dr Seuss. Random House

**I Spy, An Alphabet in Art** – Lucy Micklethwait. Greenwillow Book

ບັນດາໜັງສືຕ່າງໆທີ່ມີຢູ່ໃນບັນຊີນີ້ສາມາດຖືກນຳໃຊ້ໄດ້ເພື່ອຈຸດປະສົງຕ່າງໆ ຂອງທັງການຮູ້ ໜັງສື ແລະ ໂຕເລກ.

**ເຂົ້າເບິ່ງເວັບໄຊຕ໌ຂອງພວກເຮົາ ແລະ ຊອກ ເອົາຊັບພະຍາກອນ ຕ່າງໆເພື່ອຊ່ວຍລູກທ່ານໃຫ້ມີການເລີ່ມຕົ້ນທີ່ດີຢູ່ໃນໂຮງຮຽນ:**

**education.nsw.gov.au/lit-and-num-at-home**




# ໜັງສືພາສາອັງກິດຕ່າງໆທີ່ຊ່ວຍລູກທ່ານພັດທະນາທັກສະດ້ານໂຕເລກ

## ໜັງສືຕ່າງໆກ່ຽວກັບໂຕເລກ ແລະ ການນັບ

**Counting on Community** – Innosanto Nagara. Seven Stories Press, Penguin.

**Counting with Tiny Cat** – Viviane Schwarz. Walker Books

**Five Little Ducks** – Penny Ives. Child's Play International Ltd

**One is a Snail, Ten is a Crab** – April Pulley Sayre and Jeff Sayre, illustrator Randy Cecil. Scholastic Australia

**One Woolly Wombat** – Kerry Argent. Scholastic Australia

**Ten Black Dots** – Donald Crews. Scholastic Australia

**Ten Little Dinosaurs** – Mike Brownlow, illustrator Simon Rickerty. Orchard Books

**Ten Little Jarjum** – Tabulam Aboriginal Community members, editors Suzi Williams and Kate Merrifield. NSW Board of Studies

**Ten Scared Fish** – Ros Moriarty, illustrator Balarinji. Allen and Unwin

## ໜັງສືກ່ຽວກັບການບວກ ແລະ ການລົບ

**Five Little Monkeys Play Hide-and-seek** – Eileen Christelow. Houghton Mifflin

**Ten Little Beasties** – Rebecca and Ed Emberley. Macmillan

**Ten Little Fingers and Ten Little Toes** – Mem Fox, illustrator Helen Oxenbury. Puffin Books

**Ten Little Ladybugs** – Melanie Gerth, illustrator Laura Huliska-Beith. Intervisual Books Inc

**There Were 10 in the Bed** – illustrator Wendy Straw. Sweet Cherry Publishing

**The Shopping Basket** – John Burningham. Random House

**Uno's Garden** – Graeme Base. Penguin Books, Puffin

## ໜັງສືຕ່າງໆກ່ຽວກັບລາຍແບບ

**Anno's Counting Book** – Mitsumasa Anno. Harper Collins

**Caterpillar and Butterfly** – Ambelin Kwaymullina. Fremantle Press

**One fish, two fish, red fish, blue fish** – Dr Seuss. Random House

**The Very Hungry Caterpillar** – Eric Carle. Hamish Hamilton Press

© State of New South Wales (Department of Education), 2020.

The copyright material published in this resource is subject to the Copyright Act 1968 (Cth) and is owned by the NSW Department of Education or, where indicated, by a party other than the NSW Department of Education (third-party material).

Copyright material available in this resource and owned by the NSW Department of Education is licensed under a Creative Commons Attribution 4.0 International (CC BY 4.0) licence. This licence allows you to share and adapt the material for any purpose, even commercially.

Attribution should be given to © State of New South Wales (Department of Education), 2020.

Material in this resource not available under a Creative Commons licence:

- the NSW Department of Education logo, other logos and trademark-protected material
- material owned by a third party that has been reproduced with permission.
  You will need to obtain permission from the third party to reuse its material.

## ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມກະລຸນາໂທຫາ ທ່ານຄູໃຫຍ່ຂອງໂຮງຮຽນຂອງທ່ານ. ຖ້າທ່ານຕ້ອງການ ນາຍພາສາເພື່ອ ຊ່ວຍທ່ານໃນການສອບຖາມຂອງທ່ານກະລຸນາໂທຫາ ບໍລິການນາຍພາສາ ທາງໂທລະສັບ ຕາມໝາຍເລກ 131 450 ແລະຂໍເອົານາຍພາສາລາວ. ທ່ານບໍ່ຕ້ອງເສັຍຄ່າໃດໆໃນບໍລິການນີ້.

ກະຊວງສຶກສາ ຣັດ NSW

NSW GOVERNMENT